**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**
**ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ**

ພັກປະຊາຊົນປະຕິວັດລາວ
ກົມການເມືອງສູນກາງພັກ

ເລກທີ 15 /ກມສພ
ນະຄອນຫຼວງວຽງຈັນ, ວັນທີ 22 ພຶດສະພາ 2024

# ມະຕິຕົກລົງ
# ວ່າດ້ວຍການແຕ່ງຕັ້ງຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປີ 2015

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 3;
- ອີງຕາມໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 10/ຄປຈ, ລົງວັນທີ 09 ພຶດສະພາ 2024.

**ກົມການເມືອງສູນກາງພັກປະຊາຊົນປະຕິວັດລາວ ຕົກລົງ:**

**ມາດຕາ 1:** ແຕ່ງຕັ້ງຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປີ 2015, ຊຶ່ງປະກອບດ້ວຍບັນດາສະຫາຍ ທີ່ມີລາຍຊື່ ດັ່ງລຸ່ມນີ້:

1. ສະຫາຍ ປອ. ໄຊສົມພອນ ພົມວິຫານ — ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ເປັນປະທານ;
2. ສະຫາຍ ສຈ. ປອ. ກິແກ້ວ ໄຂຄຳພິທູນ — ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ເປັນຮອງປະທານ;
3. ສະຫາຍ ຮສ. ປອ. ທອງສະລິດ ມັງໜໍ່ເມກ — ເລຂາທິການສູນກາງພັກ, ຫົວໜ້າຫ້ອງວ່າການສູນກາງພັກ ເປັນຮອງປະທານ;
4. ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ — ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນຮອງປະທານ, ຜູ້ປະຈຳການ;
5. ສະຫາຍ ປອ. ກອງແກ້ວ ໄຊສົງຄາມ — ກຳມະການສູນກາງພັກ, ຫົວໜ້າສະຖາບັນວິທະຍາສາດເສດຖະກິດ ແລະ ສັງຄົມແຫ່ງຊາດ ເປັນກຳມະການ;
6. ສະຫາຍ ປອ. ວິໄລວົງ ບຸດດາຄຳ — ກຳມະການສູນກາງພັກ, ລັດຖະມົນຕີກະຊວງພາຍໃນ ເປັນກຳມະການ;
7. ສະຫາຍ ປອ. ບົວຄົງ ນາມມະວົງ — ກຳມະການສູນກາງພັກ, ລັດຖະມົນຕີ, ຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນກຳມະການ;
8. ສະຫາຍ ນາງ ສວນສະຫວັນ ວິຍະເກດ — ກຳມະການສູນກາງພັກ, ລັດຖະມົນຕີກະຊວງຖະແຫຼງຂ່າວ, ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ;
9. ສະຫາຍ ລາວປ່າວຊົ່ງ ນະວົງໄຊ — ກຳມະການສູນກາງພັກ, ຮອງຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ ເປັນກຳມະການ;

10. ສະຫາຍ ຄຳໄຊ ສິປະເສີດ — ກຳມະການສູນກາງພັກ, ຮອງປະທານສູນກາງແນວລາວສ້າງຊາດ ເປັນກຳມະການ;
11. ສະຫາຍ ຮສ. ພູວົງ ອຸ່ນຄຳແສນ — ກຳມະການສູນກາງພັກ, ຫົວໜ້າສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ ເປັນກຳມະການ;
12. ສະຫາຍ ນາງ ອຳໄພວອນ ລ້ອມບຸນແພງ — ກຳມະການສຳຮອງສູນກາງພັກ, ເລຂາທິການສະພາແຫ່ງຊາດ ເປັນກຳມະການ;
13. ສະຫາຍ ນາງ ທຸມມາລີ ວົງພະຈັນ — ປະທານກຳມາທິການວັດທະນະທຳ-ສັງຄົມ ເປັນກຳມະການ;
14. ສະຫາຍ ຄຳຈັນ ໂສຕາປະເສີດ — ປະທານກຳມາທິການບັນດາເຜົ່າ ເປັນກຳມະການ;
15. ສະຫາຍ ພົຕ. ວົງສັກ ພັນທະວົງ — ປະທານກຳມາທິການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເປັນກຳມະການ;
16. ສະຫາຍ ຄຳແພງ ວິລະພັນ — ປະທານກຳມາທິການຍຸຕິທຳ ເປັນກຳມະການ;
17. ສະຫາຍ ສຸບັນ ສະວະບຸດ — ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເປັນກຳມະການ;
18. ສະຫາຍ ກົງຈີ ຢ່າງຈື — ຮອງລັດຖະມົນຕີກະຊວງຍຸຕິທຳ ເປັນກຳມະການ;
19. ສະຫາຍ ບຸນຂວາງ ທະວິສັກ — ຮອງປະທານສານປະຊາຊົນສູງສຸດ ເປັນກຳມະການ;
20. ສະຫາຍ ອິນທະປັນຍາ ຂຽວວົງພະຈັນ — ຮອງຫົວໜ້າຫ້ອງວ່າການສຳນັກງານປະທານປະເທດ ເປັນກຳມະການ;
21. ສະຫາຍ ນາງ ພອນເພັດ ອຸ່ນແກ້ວ — ຮອງຫົວໜ້າອົງການໄອຍະການປະຊາຊົນສູງສຸດ ເປັນກຳມະການ.

**ມາດຕາ 2: ແຕ່ງຕັ້ງຄະນະປະຈຳການ ຊຶ່ງປະກອບດ້ວຍ:**

1. ສະຫາຍ ປອ. ໄຊສົມພອນ ພົມວິຫານ — ກຳມະການກົມການເມືອງສູນກາງພັກ, ປະທານສະພາແຫ່ງຊາດ ເປັນຫົວໜ້າ;
2. ສະຫາຍ ສຈ. ປອ. ກິແກ້ວ ໄຂຄຳພິທູນ — ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ ເປັນຮອງຫົວໜ້າ;
3. ສະຫາຍ ສຈ. ປອ. ຈະເລີນ ເຢຍປາວເຮີ — ກຳມະການສູນກາງພັກ, ຮອງປະທານສະພາແຫ່ງຊາດ ເປັນຮອງຫົວໜ້າ;
4. ສະຫາຍ ປອ. ວິໄລວົງ ບຸດດາຄຳ — ກຳມະການສູນກາງພັກ, ລັດຖະມົນຕີກະຊວງພາຍໃນ ເປັນກຳມະການ;
5. ສະຫາຍ ນາງ ທຸມມາລີ ວົງພະຈັນ — ປະທານກຳມາທິການວັດທະນະທຳ-ສັງຄົມ ເປັນກຳມະການ;
6. ສະຫາຍ ຄຳແພງ ວິລະພັນ — ປະທານກຳມາທິການຍຸຕິທຳ ເປັນກຳມະການ;
7. ສະຫາຍ ສຸບັນ ສະວະບຸດ — ປະທານກຳມາທິການວຽກງານສະມາຊິກສະພາແຫ່ງຊາດ ເປັນກຳມະການ.

**ມາດຕາ 3: ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບປີ 2015 ມີ ສິດ ແລະ ໜ້າທີ່ ດັ່ງນີ້:**

1. ແບ່ງງານ, ແບ່ງຄວາມຮັບຜິດຊອບ ພາຍໃນຄະນະກຳມະການລະດັບຊາດ ແລະ ຄະນະປະຈຳການແຕ່ລະສະຫາຍໃຫ້ລະອຽດ, ຈະແຈ້ງ, ແຕ່ງຕັ້ງບັນດາອະນຸກຳມະການ ແລະ ໜ່ວຍງານຊ່ວຍວຽກໃຫ້ຄົບຖ້ວນ;

2. ຊີ້ນຳການສ້າງແຜນການດຳເນີນງານ, ການຂຶ້ນແຜນງົບປະມານ ເພື່ອຮັບໃຊ້ໃຫ້ແກ່ການປັບປຸງລັດຖະທຳມະນູນ;
3. ຊີ້ນຳການຄົ້ນຄວ້າປັບປຸງເນື້ອໃນ ຂອງລັດຖະທຳມະນູນ ແຫ່ງ ສປປ ລາວ ສະບັບປີ 2015;
4. ຊີ້ນຳການຈັດກອງປະຊຸມສຳມະນາວິທະຍາສາດ ແລະ ການທາບທາມຄຳຄິດຄຳເຫັນຂອງປະຊາຊົນ ແລະ ຊັ້ນຄົນຕ່າງໆ ກ່ຽວກັບເນື້ອໃນຂອງຮ່າງລັດຖະທຳມະນູນ ສະບັບປັບປຸງໃໝ່;
5. ຊີ້ນຳການສະຫຼຸບສັງລວມການທາບທາມຄຳເຫັນ ແລະ ປັບປຸງຮຽບຮຽງເນື້ອໃນຮ່າງລັດຖະທຳມະນູນ ແລ້ວລາຍງານຂໍຄຳເຫັນຊີ້ນຳ ຕໍ່ກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ;
6. ນຳເອົາຮ່າງລັດຖະທຳມະນູນ ສະບັບປັບປຸງໃໝ່ ສະເໜີຕໍ່ກອງປະຊຸມຄະນະປະຈຳສະພາແຫ່ງຊາດ ແລະ ກອງປະຊຸມສະພາແຫ່ງຊາດ ເພື່ອພິຈາລະນາ;
7. ກຳນົດສິດ ແລະ ໜ້າທີ່ ຂອງຄະນະປະຈຳການ ຄະນະກຳມະການລະດັບຊາດ ປັບປຸງລັດຖະທຳ ມະນູນ ສະບັບປີ 2015;
8. ແຕ່ງຕັ້ງ ແລະ ຊີ້ນຳການເຄື່ອນໄຫວວຽກງານຂອງກອງເລຂາ ແລະ ອະນຸກຳມະການຕ່າງໆກ່ຽວກັບການປັບປຸງລັດຖະທຳມະນູນ;
9. ນຳໃຊ້ສິດ ແລະ ໜ້າທີ່ອື່ນຕາມການມອບໝາຍ ຂອງກົມການເມືອງ ແລະ ຄະນະເລຂາທິການສູນກາງພັກ.

**ມາດຕາ 4:** ສະພາແຫ່ງຊາດ, ລັດຖະບານ, ສານປະຊາຊົນ, ອົງການໄອຍະການປະຊາຊົນ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ສະພາປະຊາຊົນຂັ້ນແຂວງ, ອົງການປົກຄອງທ້ອງຖິ່ນທຸກຂັ້ນ ແລະ ພາກສ່ວນທີ່ກ່ຽວຂ້ອງ; ພ້ອມດ້ວຍບັນດາສະຫາຍ ທີ່ໄດ້ຮັບການແຕ່ງຕັ້ງ ຈົ່ງຮັບຮູ້ ແລະ ປະຕິບັດຕາມມະຕິຕົກລົງສະບັບນີ້ຢ່າງເຂັ້ມງວດ ເພື່ອເຮັດໃຫ້ການປັບປຸງລັດຖະທຳມະນູນສະບັບນີ້ ໄດ້ດຳເນີນໄປທັນຕາມກຳນົດເວລາດ້ວຍຜົນສຳເລັດຕາມຈຸດປະສົງລະດັບຄາດໝາຍ.

**ມາດຕາ 5:** ມະຕິສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນເປັນຕົ້ນໄປ.

**ຕ. ກົມການເມືອງສູນກາງພັກ**
**ເລຂາທິການໃຫຍ່ ຄະນະບໍລິຫານງານສູນກາງພັກ**

**ທອງລຸນ ສີສຸລິດ**